ຟ້າເອີຍຟ້າຮ້ອງຫ້າວ ຄິດເຫັນຄາວຍັງຮຽນຢູ່ ຫຼັກເຈັດອົບຮົມຄຣູ

ບ່ອນນາງເຄີຍພັກຢັ້ງ ຍັງຈຳໜັ້ນ ... ແມ່ນບໍ່ລືມ... ແມ່ນບໍ່ລືມ... ໂອ່ຍ... ໂອ໋ຍ.... ລະນາ

ອັນນີ້... ສິບນິ້ວຍໍຍົກໄຫວ້ ຄາຣະວະເໜືອສຽນ

ຮຽນຊຸມຄຣູອາຈານ ທ່ານຜູ້ມາໃນງານນີ້

ກັບທັງຮຽນຫົວໜ້າ ອຳນວຍການອາຈານໃຫຍ່ ໂອ່ຍ..ນໍ

ເດີນທາງມາແຕ່ໄກ ຈາກເຂດເໜືອແລະເຂດໃຕ້ ກໍມາພ້ອມຄູ່ສູ່ຄົນ......

ອັນນີ້ ຊື່ນດີໃຈພົ່ນລົ້ນ ໄດ້ເຫັນເພື່ອນພົງສນິດ

ຊຶ່ງເປັນສິດອົບຮົມຄຣູ ໝູ່ທຸກຄົນມີໜ້າ

ມາໃນງານສັງສັນນີ້ ມີນັກຮຽນທຸກຊັ້ນສໍ່າ

ທັງຊັ້ນສູງຊັ້ນຕໍ່າ ຮຸ່ນນ້ອງທັງອ້າຍເອື້ອຍ ກໍໜາຍລ້ວນເພື່ອປະສົງ....

ອັນນີ້...ຄວາມຫວັງຄຶງພົບພໍ້ ເຫັນເພື່ອນມິດຫຼັກເຈັດ

ຈາກເຂດແຂວງມານານ ຫ່ວງກະສັນໃຈເສົ້າ

ເຮົາເຫັນກັນໃນວັນນີ້ ສຸດຊຶ້ງແສນຍິນດີ ນ້ຳຕາຍ້ອນລົນຫຼັ່ງ ໂອ່ຍນໍ......

ລາງຄົນເຊຊຸດລົ້ມ ເປັນລົມມ້ວນຊົ່ວຄາວ

ບາງຄົນຊົມຊື່ນຫ້າວ ຮ້ອງໂຫ່ຍິນດີ

ສາມສິບປີແສນລຳພັນ ທີ່ຈາກກັນໄປຄົນກ້ຳ

ອັນນີ້... ບຸນຊັກນຳຈຶ່ງມາພໍ້ ພລາພໍຈຶ່ງມາຈວບ

ຄວບກັບໃຈມຸ້ງໜັ້ນ ຈຶ່ງທັນພໍ້ພົບກັນ........

ອັນວ່າ.... ບຸນພລາວ່ານັ້ນ ປຸນປັ້ນແຕ່ງລິຂິດ

ທີ່ເຮົາຍັງມີຊີວິດ ຢູ່ມາຈົນວັນນີ້

ມີຫຼາຍຄົນຄືເຮົາຮູ້ ຍັງເປັນຄຣູໄດ້ສືບຕໍ່ ໂອ່ຍ..ເດ...ນໍ...

ບາງຄົນມາຮຽນຕໍ່ ເພື່ອວ່າຍໍຍົກຂັ້ນ ສຳຄັນກ້າວລື່ນໄປ.....

ມີຫຼາຍຄົນຮຽນໄດ້ ໃບປະກາດປຣິນຍາ

ກໍຍ້ອນການສຶກສາ ຈາກພື້ນຖານເຮົາມີໄວ້

ແຕ່ສ່ວນຫຼາຍພວກເຮົາສູ້ ບຸກບືນດຸໜັ່ນ ....ຮຽນແລ້ວ.....

ຍ້ອນເຫັນຄວາມສຳຄັນ ຄວາມອົດທົນຮອບດ້ານ ກໍເລີຍກ້າວແລ່ນໄກ....

ອັນນີ້... ມີຫຼາຍຄົນຈົນວ່າໄດ້ ເປັນນາຍໃຫຍ່ຜູ້ຈັດການ

ຄວບຄຸມທັງໂຮງງານ ຈົນຊື່ສຽງດັງກ້ອງ

ສັງຄົມລາວເຮົາຍໍຍ້ອງ ຄວາມເປັນຄຣູສູ້ບາກບັ່ນ ໂອ່ຍ... ນໍ...

ເຊາະຊອກສັນຄວາມກ້າວຫນ້າ ບໍ່ຢຸດຢັ້ງນັ່ງເສີຍ

ບໍ່ນັ່ງເຮັດສະເບີ້ຍເກີ້ຍ ຄືຄົນບໍ່ມີແນວຄິດ

ເປັນລູກສິດຫຼັກເຈັດ ບໍ່ໃຫ້ສູນເສັຽຫນ້າ

ການນຳພາສອນຊີ້ ຄຣູອາຈານເພິ່ນສອນສັ່ງ

ຢັ່ງຍ້ອນມອງການໄກ ຍັງຝັງໃຈຍຶດຫມັ້ນ ສຳຄັນສ້າງພວກຫມູ່ເຮົາ.....

ອັນນີ້ ນັບວ່າບຸນຄຸນເຄົ້າ ທີ່ເຮົາຮ່ຳຮຽນມາ

ຄຸນຄຣູບາອາຈານ ທ່ານຜູ້ນຳສອນຊີ້

ມີມາກມາຍເຫຼືອລົ້ນ ຈົນບັລຍາຍໄປບໍ່ໄຂວ່ ເດ... ນໍ....

ພວກເຮົາຍໍຍົກໄວ້ ເຫນືອເກົ້າບໍ່ອາດລືມ

ຊຶມຊາບຈາຣຶກໄວ້ ໃນຣະຫວ່າງສຳນຶກ

ເລິກລົງໃນດວງຈິດ ຄິດສເມີບຸນຄຸນທ່ານ

ເຫັນອາຈານວັນນີ້ ນາງດີໃຈຈົນໄຫ້ຮ່ຳ ເດ..ນໍ.....

ນ້ຳຕາພາງຍິນດີ ຜົລກັມດີທ່ານສ້າງໄວ້ ໃຫ້ນຳຍູ້ຄູ່ສູ່ຄົນ ....

ຂໍໃຫ້ ທ່ານຈົ່ງສຸຂຂີລົ້ນ ຄົນຍໍຍົກບູຊາ

ມີພລາອະນິສົງ ແລະຄອບຄົວໃຫ້ເຮືອງກ້າ

ຂໍຂະມາອະພັຍໃຫ້ ຫາກເຄີຍຜິດພາດເພິ່ນ ໂອ່ຍ...ເດ...ນໍ...

ສິ່ງໃດເຄີຍລ່ວງເກີນ ອະໂຫສິຍົກໃຫ້ ອະພັຍດ້ວຍໂທດກັມ......

ບັດນີ້....ເວລາເລີຍລ່ວງລ້ຳ ລຳຂໍອ່ວຍທາງລົງ

ປົງໄວ້ເປັນອຸທາຫອນ ພ້ອມອວຍພອນລົງທ້າຍ

ຂໍໃຫ້ຊຸມຊາວເຊື້ອ ນັກຮຽນຄຣູໃຫ້ສືບຕໍ່

ພາກັນສານພາກກັນກໍ່ ຫຸ້ມຫໍ່ຄວາມຮັກຫມັ້ນ ສັມພັນເຂົ້າຮັກຫອມ

ພາກັນ....ສາມັກຄີກວາດຕ້ອມ ໃຫ້ໂຮມຮັບຈັບມື

ຖືຄວາມດີເປັນຫຼັກ ໃຫ້ຮັກແພງກັນເຂົ້າ

ທັງອາຈານທຸກຄົນພ້ອມ ໃຫ້ຮ່ວມກັນເປັນຫມູ່

ຊຸກຍູ້ໃນຮອບດ້ານ.... ເປັນສະພານໄຕ່ເຕົ້າ ໃຫ້ຫັນຫນ້າແມ່ນໃສ່ກັນ

ສ່ວນວ່າ ສຸຂພາບທ່ານນັ້ນ ປັສຈາກໂພຍພັຍ ແມ່ທ້ອນ

ອາຍຸສັງຂາລຂັຍ ໃຫ້ປອດພັຍໂຣຄາສິ້ນ

ພະຍາດມານຢ່າມາໃກ້ ມີໂຊກຊັຍໄຫຼສູ່ ເດ... ນໍ...

ຫມູ່ຝູງຍໍຍົກໄຫວ້ ມີເຫຼືອໃຊ້ຢ່າຂາດເຂີນ

ອັນວ່າຖານະນັ້ນ ຊັພສິນເງິນຢ່າເຂີນຂາດ

ປາຖນາຢາກໄດ້ ໃຫ້ສົມແມ້ງທຸກອັນ

ຂໍມ້ວນທ້າຍບ່ອນນັ້ນ ກອນລຳລ່ອງບຸນຄຸນຄຣູ

ສະຫາຍຫມູເປັນຄົນຂຽນ ບຸນຊື່ນພຽນມາລຳໃຫ້

ຂໍຈາກໃກແຕ່ຄາວນີ້ ແສນເຕັມທີບາດຊິຫ່າງ ໂອ່ຍ.. ເດ... ນໍ....

ຊິໄດ້ໃກໄປຄົນທາງ ຫົວໃຈເປັນອ້າງວ້າງ ບາດຄືນບ້ານ ໃຫ້ຮ່ຳຮອນ

ໃຫ້ຮ່ຳຮອນ ແສນອາວອນ ເອີ່... ເອີ... ໂອຍ.... ລະນາ